ປະຈຳໄຕມາດ ສະບັບທີ 1
ພຶດສະພາ - ກັນຍາ, 2017

# ຈົດໝາຍຂ່າວ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ

ສະບັບວັນທີ 31 ຕຸລາ 2017

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ແມ່ນເຄືອຂ່າຍໜຶ່ງຂອງອົງການຈັດຕັ້ງທາງສັງຄົມທີ່ໄດ້ເກີດຂຶ້ນໃນ ສປປ ລາວ ນັບແຕ່ປີ 2007 ເປັນຕົ້ນມາ. ການເຂົ້າເປັນສະມາຊິກຂອງ LIWG ມີ ສອງລະດັບ ເຊິ່ງປະກອບດ້ວຍສະມາຊິກຫລັກ ແລະ ສະມາຊິກສະໜັບສະໜູນ. ກຸ່ມດັ່ງກ່າວນີ້ໄດ້ຖືກສ້າງຕັ້ງຂຶ້ນເພື່ອວ່າບັນດາສະມາຊິກຈະສາມາດແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນກ່ຽວກັບເລື່ອງທີ່ດິນ ແລະ ເພື່ອຮ່ວມກັນພັດທະນາການຍຸດທະສາດໃນການແກ້ໄຂ ບັນຫາປະເດັນທີ່ດິນທີ່ເກີດຂຶ້ນ. ທ່ານສາມາດສຶກສາເບິ່ງເພີ່ມເຕີມກ່ຽວກັບ LIWG ໄດ້ ທີ່ນີ້.

พາກເນື້ອໃນ:


| | |
|---|---|
| ການຈັດກອງປະຊຸມ ແລະ ຝຶກອົບຮົມໂດຍ LIWG | 1 |
| ກຸ່ມເຮັດວຽກສະເພາະ | 3 |
| ກໍລະນີສຶກສາ | 3 |
| ຊ່ອງທາງການຕິດຕໍ່ສື່ສານ - ແລກປ່ຽນຂໍ້ມູນ ຂອງ LIWG | 4 |
| ກິດຈະກຳຂອງສະມາຊິກ/ການລິເລີ່ມ ຂອງ LIWG | 4 |
| ກິດຈະກຳໄຕມາດຕໍ່ໜ້າ | 4 |


*ເລື່ອງເດັ່ນປະຈຳໄຕມາດ:*



**ພາຍໃນງານກອງປະຊຸມຝຶກອົບຮົມກ່ຽວກັບທີ່ດິນແກ່ສະພາແຫ່ງຊາດ. ກັນຍາ, 2017**

### ກອງປະຊຸມຝຶກອົບຮົມກ່ຽວກັບທີ່ດິນ

ກອງປະຊຸມດັ່ງກ່າວ ແມ່ນຈັດຂຶ້ນ ເພື່ອເປັນການຍົກລະດັບຄວາມຮູ້ ແກ່ບັນດາສະມາຊິກສະພາແຫ່ງຊາດ ແລະ ຂັ້ນແຂວງ ກ່ຽວກັບປະເດັນທີ່ດິນທີ່ໂດຍສະເພາະ ກົດໝາຍທີ່ດິນ ເພື່ອເປັນການສະໜັບສະໜູນບົດບາດຂອງບັນດາສະມາຊິກນັ້ນ ໃນການພັດທະນາ ແລະ ປະຕິບັດນະໂຍບາຍ.

*ອ່ານລາຍລະອຽດໃນໜ້າທີ 2.*

## ການຈັດກອງປະຊຸມ ແລະ ຝຶກອົບຮົມໂດຍ LIWG

### ສຳມະນາເລື່ອງ ການປ່ຽນແປງຂອງສະພາບດິນຟ້າອາກາດ

ໃນປີ 2017 ໄດ້ມີການສະເຫຼີມສະຫຼອງວັນຄຸ້ມຄອງໂລກ ພາຍໃຕ້ຫົວຂໍ້: ການປ່ຽນແປງດິນຟ້າອາກາດ ແລະ ສິດທິການຄອບຄອງທີ່ດິນ. ເນື່ອງຈາກວ່າ LIWG ໄດ້ເຂົ້າຮ່ວມເປັນພາກສ່ວນໜຶ່ງຂອງຂະບວນການຮຽກຮ້ອງສິດທິທີ່ດິນ (Land Right Now)! ສະນັ້ນ ກໍ່ໄດ້ປະກອບສ່ວນເຂົ້າໃນຂະບວນການຮຽກຮ້ອງສິດທິທີ່ດິນ ດ້ວຍການຈັດກອງປະຊຸມສຳມະນາຂຶ້ນ ໃນທ້າຍເດືອນ ເມສາ 2017 ເຊິ່ງໄດ້ມີການຮັບຟັງການນຳສະເໜີຈາກນັກວິໄຈ ແລະ ສົນທະນາແລກປ່ຽນບົດຮຽນໃນສອງຫົວຂໍ້ ຄື:

ການຮັບປະກັນ ການເຂົ້າເຖິງແຫຼ່ງຜະລິດເຂົ້າ: ໃນປັດໄຈອັນສຳຄັນ ເພື່ອກ້າວເຖິງການຜະລິດກະສິກຳຢ່າງມີຍຸດທະສາດ ຕໍ່ສະພາບການປ່ຽນແປງຂອງດິນຟ້າອາກາດ ຢູ່ເຂດເນີນສູງທາງພາກເໜືອຂອງປະເທດລາວ; ການຮັບປະກັນການຄອບຄອງຂອງຊຸມຊົນ ໃນພື້ນທີ່ເຂດປ່າ: ທາງເລືອກ ແລະ ການຄ້າ REDD+ ຢູ່ໃນປະເທດລາວ.

ກອງປະຊຸມສຳມະນາໃນຄັ້ງນີ້ ໄດ້ເຂົ້າຮ່ວມໂດຍອົງການຈັດຕັ້ງຕ່າງໆ ທີ່ເປັນສະມາຊິກຂອງ LIWG.

ທ່ານສາມາດສຶກສາເພີ່ມເຕີມກ່ຽວກັບຂະບວນການຮຽກຮ້ອງສິດທິທີ່ດິນໄດ້ ທີ່ນີ້.



*ຊາວນາທ່ານໜຶ່ງກຳລັງຊຳກ້າ ໃນທີ່ນາຂອງຕົນ. ແຂວງ ຜົ້ງສາລີ, ປະເທດລາວ.*

ພາບໂດຍ: ແອນໂທນີ້

### ກອງປະຊຸມກ່ຽວກັບ ວຽກງານການວາງແຜນນຳໃຊ້ທີ່ດິນ

ໃນທ້າຍເດືອນ ພຶດສະພາ 2017 ທາງ LIWG, TABI ແລະ MRLG ໄດ້ຮ່ວມກັນ ຈັດງານຝຶກອົບຮົມ"**ແນວທາງການປະຕິບັດໃນການວາງແຜນການໃຊ້ທີ່ດິນຮ່ວມກັບຊຸມຊົນໃນປະເທດລາວ**"ເພື່ອນຳສະເໜີ ຜົນຂອງການສຶກສາ ຈາກ ອົງການ CIDSE, LIWG ແລະ TABI ກ່ຽວກັບ ການວາງແຜນນຳໃຊ້ທີ່ດິນ, ໃນງານດັ່ງກ່າວ ໄດ້ມີຜູ້ເຂົ້າຮ່ວມຈາກຫຼາຍພາກສ່ວນ ເຊັ່ນ ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ ແລະ ນັກວິຊາການ ເຊິ່ງຜູ້ເຂົ້າຮ່ວມໄດ້ແລກປ່ຽນສົນທະນາ ແລະ ໃຫ້ຄຳຄິດເຫັນກ່ຽວກັບ ການລິເລີ່ມການໃຊ້ຍຸດທະວິທີຕ່າງໆ ເພື່ອເຮັດໃຫ້ວຽກງານ ການວາງແຜນນຳໃຊ້ທີ່ດິນ ມີປະສິດທິພາບຫຼາຍກວ່າເກົ່າ ແລະ ການເຮັດໃຫ້ການຄອບຄອງນຳໃຊ້ທີ່ດິນໃນຂັ້ນບ້ານ ຢູ່ໃນ ສປປລາວ ມີຄວາມເຂັ້ມແຂງຍິ່ງຂຶ້ນ.

### ກອງປະຊຸມພົບຄະນະຊີ້ນຳ LIWG

ກອງປະຊຸມ **ຄະນະຊີ້ນຳ LIWG** ແມ່ນໄດ້ຈັດຂຶ້ນທຸກໆເດືອນ ເພື່ອລາຍງານກ່ຽວກັບວຽກງານຂອງກອງເລຂາ, ປຶກສາຫາລື ແລະ ຂໍຄຳເຫັນ ຈາກຄະນະຊີ້ນຳ ກ່ຽວກັບວຽກງານ ແລະ ບັນຫາຕ່າງໆ ເຊັ່ນ ສະຖານະທາງດ້ານການເງິນ ແລະ ການລະດົມທຶນ, ວຽກງານການປັບປຸງກົດໝາຍທີ່ດິນ, ໜ້າວຽກຂອງກຸ່ມວິຊາການສະເພາະ, ກໍລະນີສຶກສາ ແລະ ແຜນຍຸດທະສາດໃນການສື່ສານ ເປັນຕົ້ນ.

### ການປະຊຸມ ສະມາຊິກຫຼັກ

ກອງປະຊຸມ ສະມາຊິກຫຼັກ ໄດ້ມີການຈັດຂຶ້ນເປັນປະຈຳ ໜຶ່ງຄັ້ງຕໍ່ໄຕມາດ ເພື່ອນຳສະເໜີຜົນຂອງການປະຕິບັດວຽກງານຂອງກອງເລຂາ LIWG ໃນໄຕມາດທີ່ຜ່ານມາ. ກອງປະຊຸມປະຈຳໄຕມາດນີ້ ໄດ້ຈັດຂຶ້ນໃນເດືອນ ພຶດສະພາ 2017. ພາຍໃນກອງປະຊຸມ ກອງເລຂາ LIWG ໄດ້ນຳສະເໜີກ່ຽວກັບ ການປະຕິບັດວຽກງານໃນໄຕມາດທຳອິດ ແລະ ນຳສະເໜີ ແຜນວຽກໃນໄຕມາດທີສອງ ປະຈຳປີ 2017 ໃຫ້ແກ່ບັນດາສະມາຊິກ. ນອກນັ້ນ ຍັງໄດ້ນຳສະເໜີກ່ຽວກັບຄວາມຄືບໜ້າຂອງການປັບປຸງກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ຈາກ ກຸ່ມເຮັດວຽກຂະແໜງການຍ່ອຍກ່ຽວກັບທີ່ດິນ. ພ້ອມນັ້ນຍັງໄດ້ແຈ້ງ ແລະ ແຈ້ງເຊີນໃຫ້ບັນດາສະມາຊິກຂອງ LIWG ເຂົ້າຮ່ວມ ກອງປະຊຸມແລກປ່ຽນລະດັບພາກພື້ນ ຂອງອົງການຈັດຕັ້ງທາງສັງຄົມ ເຊິ່ງຈະໄດ້ຈັດຂຶ້ນໃນປີ 2018 ນີ້. ພາຍໃນກອງປະຊຸມ ຍັງໄດ້ມີການນຳສະເໜີຈາກແຂກຮັບເຊີນ ແລະ ສະມາຊິກຂອງ LIWG ກ່ຽວກັບ ກໍລະນີສຶກສາ ການເຮັດວຽກຮ່ວມກັບຊຸມຊົນ ແລະ ອົງການຄູ່ຮ່ວມພັດທະນາ ທີ່ກ່ຽວຂ້ອງອື່ນໆ ກ່ຽວກັບ ການຄຸ້ມຄອງປ່າສະຫງວນບ້ານ ໃນປະເທດລາວ; ລາຍງານຄືນ ປະເດັນພົ້ນເດັ່ນ ທີ່ໄດ້ມີການສົນທະນາໃນກອງປະຊຸມກ່ຽວກັບທີ່ດິນ ແລະ ຄວາມທຸກຍາກ ທີ່ຈັດຂຶ້ນໂດຍ ທະນາຄານໂລກ. ນອກນັ້ນ ທີມງານຂອງໂຄງການ LIFE ຍັງໄດ້ນຳສະເໜີ ກ່ຽວກັບຜົນຂອງການດຳເນີນກິດຈະກຳ ໃນໄລຍະຜ່ານມາ ພ້ອມກັບນຳສະເໜີຄວາມຄືບໜ້າຂອງບັນດາກິດຈະກຳຂອງໂຄງການທີ່ກຳລັງດຳເນີນຢູ່.

ທາງກອງເລຂາ LWG ຍັງໄດ້ເຊີນ ຕົວແທນຈາກ ອົງການ Forest Trend ຈາກປະເທດຫວຽດນາມເພື່ອມາແລກປ່ຽນປະສົບການ ກ່ຽວກັບການຈັດສັນທີ່ດິນປ່າໃຫ້ແກ່ຊຸມຊົນ ຢູ່ໃນປະເທດຫວຽດນາມ ດ້ວຍ.

## ກອງປະຊຸມ ການພັດທະນາປະຕິທິນກົດໝາຍ* ປີ 2018



ບັນຍາກາດທີມງານລະດົມແນວຄວາມຄິດຮ່ວມກັນເພື່ອຮ່າງຫົວຂໍ້ ແລະ ຮູບພາບຂອງປະຕິທິນສະບັບປີ 2018. ກໍລະກົດ, 2017.

ກອງປະຊຸມ ເພື່ອພັດທະນາປະຕິທິນກົດໝາຍ ປີ 2018 ປະຈຳປີ 2017 ໄດ້ຈັດຂຶ້ນ 3 ຄັ້ງໃນໄຕມາດນີ້. ກອງປະຊຸມຄັ້ງທຳອິດ ແມ່ນຈັດຂຶ້ນໃນເດືອນ ມິຖຸນາ ປີ 2017 ໂດຍການເຂົ້າຮ່ວມຂອງ ກອງເລຂາ LIWG ແລະ ສະມາຊິກຂອງ LIWG ເພື່ອະດົມແນວຄວາມຄິດໃນການກຳນົດຫົວຂໍ້ ແລະ ກຸ່ມເຮັດວຽກສະເພາະສຳລັບການສ້າງປະຕິທິນ ປີ 2018.

ກອງປະຊຸມຄັ້ງທີ 2 ແມ່ນໄດ້ຈັດຂຶ້ນໃນເດືອນ ກໍລະກົດ ປີ 2017 ເພື່ອກຳນົດ ບັນດາ ກົດໝາຍ, ກົດລະບຽບ, ດຳລັດ ແລະ ຄຳສັ່ງຕ່າງໆທີ່ກ່ຽວຂ້ອງກັບຫົວຂໍ້ທີ່ກຳນົດໄວ້ ເພື່ອນຳສະເໜີໃນປະຕິທິນສະບັບ ປີ 2018. ໃນກອງປະຊຸມຄັ້ງດັ່ງກ່າວ ຄະນະຮັບຜິດຊອບສະເພາະ ແລະ ນັກແຕ້ມຮູບພາບປະຕິທິນ ໄດ້ຮ່ວມກັນຮ່າງຮູບພາບປະກອບເບື້ອງຕົ້ນຂອງແຕ່ລະຫົວຂໍ້.ກອງປະຊຸມຄັ້ງທີ 3 ໄດ້ຈັດຂຶ້ນໃນເດືອນ ກັນຍາ ປີ 2017 ເພື່ອ ນຳສະເໜີຄວາມຄືບໜ້າກ່ຽວກັບການເນື້ອຫາຂອງປະຕິທິນ ພ້ອມນັ້ນ ນັກແຕ້ມຍັງໄດ້ນຳສະເໜີກ່ຽວກັບຮູບພາບປະກອບຂອງແຕ່ຫົວຂໍ້ ແລະ ສົນທະນາຮ່ວມກັນ ເພື່ອປັບປຸງໃຫ້ຮູບພາບມີຄວາມແທດເໝາະກັບເນື້ອຫາຂອງແຕ່ລະຫົວຂໍ້ຍິ່ງຂຶ້ນ.

ການສ້າງປະຕິທິນກົດໝາຍສະບັບ ປີ 2018 ແມ່ນກຳລັງຢູ່ໃນໄລຍະການສະຫຼຸບຜົນ ແລະ ຈະໄດ້ມີການເປີດໂຕໃນທ້າຍເດືອນ 12 ປີ 2017 ນີ້.

ທ່ານສາມາດເບິ່ງປະຕິທິນສະບັບປີ 2017 ທີ່ຜ່ານມາໄດ້ ທີ່ນີ້.

## ກອງປະຊຸມ ຂະແໜງການຍ່ອຍກ່ຽວກັບທີ່ດິນ

ກອງປະຊຸມ ຂະແໜງການຍ່ອຍກ່ຽວກັບທີ່ດິນ ໄດ້ຈັດຂຶ້ນໃນເດືອນ ມິຖຸນາ ປີ 2017 ເພື່ອລາຍງານຄວາມຄືບໜ້າຂອງວຽກງານປັບປຸງກົດໝາຍທີ່ດິນ, ເຊິ່ງ ໄດ້ໃຫ້ກຽດເຂົ້າຮ່ວມເປັນປະທານ ໂດຍຕາງໜ້າ ຄະນະຊີ້ນຳ LIWG.

ຈຸດປະສົງໃນການຈັດກອງປະຊຸມ ແມ່ນເພື່ອຮັບຟັງຜົນການເຮັດວຽກ ຂອງກຸ່ມເຮັດວຽກກ່ຽວກັບທີ່ດິນຂອງ LIWG; ເພື່ອປຶກສາຫາລື ແລະ ຖອດຖອນບົດຮຽນໃນການປັບປຸງຮ່າງກົດໝາຍວ່າດ້ວຍທີ່ດິນ ພ້ອມທັງຫາວິທີແກ້ໄຂບັນຫາຮ່ວມກັນ; ເພື່ອສັງລວມຫົວຂໍ້ ແລະ ກະກຽມລາຍງານຕໍ່ກອງປະຊຸມຂະແໜງການຂອງ ກຊສ. ໃນກອງປະຊຸມຄັ້ງນີ້, ທ່ານ ວົງເດືອນ, ປະທານກອງປະຊຸມ ໄດ້ນຳສະເໜີລາຍລະອຽດຂອງ ມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການເພີ່ມທະວີວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນໃນໄລຍະໃໝ່ ເຊິ່ງ ມະຕິດັ່ງກ່າວ ແມ່ນສ້າງຂຶ້ນແທນນະໂຍບາຍທີ່ດິນແຫ່ງຊາດສະບັບກ່ອນ.

ທ່ານສາມາດສຶກສາເບິ່ງລາຍລະອຽດເພີ່ມເຕີມກ່ຽວກັບ ມະຕິດັ່ງກ່າວໄດ້ ທັງສະບັບ ພາສາລາວ ແລະ ພາສາອັງກິດ.

## ກອງປະຊຸມນຳສະເໜີຜົນໄດ້ຮັບຂອງກຳລະນິສຶກສາ

LIWG ແລະ ຄະນະວິທະຍາສາດສັງຄົມ (ຄສສ), ມະຫາວິທະຍາໄລແຫ່ງຊາດລາວ (ມຊ) ໄດ້ຮ່ວມຈັດກອງປະຊຸມນຳສະເໜີຜົນໄດ້ຮັບຂອງກຳລະນິສຶກສາ ໃນເດືອນ 7 ປີ 2017 ເພື່ອນຳສະເໜີຜົນໄດ້ຮັບ ແລະ ຜົນໄດ້ຮັບເບື້ອງຕົ້ນ ຂອງກໍລະນີສຶກສາ ພ້ອມທັງສົນທະນາ ກ່ຽວກັບການນຳໃຊ້ຜົນໄດ້ຮັບດັ່ງກ່າວ ເຂົ້າໃນການປັບປຸງການຄຸ້ມຄອງ-ບໍລິຫານທີ່ດິນ, ການສົ່ງເສີມເວທີສົນທະນາທາງດ້ານນະໂຍບາຍ ແລະ ການພັດທະນາລະບຽບວິທີວິໄຈກ່ຽວກັບທີ່ດິນ. ກອງປະຊຸມນີ້ມີຜູ້ເຂົ້າຮ່ວມຫຼາຍທ່ານ ເຊິ່ງລວມມີ ບັນດາອາຈານ ແລະ ນັກວິໄຈ ຈາກ ມຊ, ນັກສຶກສາຈາກຄະນະ ຄສສ, ສະມາຊິກຂອງ LIWG ແລະ ຕົວແທນຄູ່ຮ່ວມງານຂອງພາກລັດ.

ທ່ານສາມາອ່ານເພີ່ມເຕີມກ່ຽວຜົນຂອງກອງປະຊຸມດັ່ງກ່າວໄດ້ ທີ່ນີ້.



ບັນດາຜູ້ເຂົ້າຮ່ວມໃນກອງປະຊຸມ, ຄສສ, ກໍລະກົດ 2017.

## ກອງປະຊຸມສຳມະນາກ່ຽວກັບທີ່ດິນ ແກ່ສະມາຊິກສະພາແຫ່ງຊາດແຫ່ງຊາດ ແລະ ຂັ້ນແຂວງ

ຫຼັງຈາກຄວາມພະຍາຍາມໃນຫຼາຍປີຜ່ານມາ ເພື່ອຈັດກອງປະຊຸມໃຫ້ກັບສະມາຊິກສະພາກ່ຽວກັບວຽກງານທີ່ດິນ, ໃນທີ່ສຸດໃນທ້າຍເດືອນ ກັນຍາ ປີ 2017, LIWG ໄດ້ຮັບການເຫັນດີຈາກ ສະຖາບັນຄົ້ນຄວ້ານິຕິກຳ, ສະພາແຫ່ງຊາດ ໃນການຈັດຝຶກອົບຮົມສຳມະນາກ່ຽວກັບ ການແລກປ່ຽນຄວາມຮູ້ ແລະ ບົດຮຽນກ່ຽວກັບການບໍລິຫານວຽກງານທີ່ດິນ ແລະ ຊັບພະຍາກອນທຳມະຊາດໃຫ້ແກ່ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາຂັ້ນແຂວງ. ກອງປະຊຸມນີ້ ເກີດຂຶ້ນໂດຍການສະໜັບສະໜູນຈາກຫຼາຍອົງການ ຄື: ອົງການ Oxfam, FAO, GIZ, SDC ແລະ EU.

ກອງປະຊຸມດັ່ງກ່າວ ເປັນການຮ່ວມກັນຈັດລະຫວ່າງ LIWG ແລະ ສະຖາບັນຄົ້ນຄວ້ານິຕິກຳ, ສະພາແຫ່ງຊາດ ແລະ ມີບັນດາສະມາຊິກສະພາແຫ່ງຊາດ ແລະ ສະພາຂັ້ນແຂວງຈາກທຸກໆແຂວງ ໃນທົ່ວປະເທດ, ອົງການຈັດຕັ້ງທາງດ້ານສັງຄົມ ທີ່ເປັນສະມາຊິກຂອງ LIWG ເຂົ້າຮ່ວມ.

ທ່ານສາມາດອ່ານຂ່າວກ່ຽວກັບກອງປະຊຸມດັ່ງກ່ຽວໄດ້ ທີ່ນີ້.

*"ກອງປະຊຸມນີ້ ແມ່ນໄດ້ປະກອບສ່ວນໃນການສ້າງຄວາມເຂົ້າໃຈແກ່ບັນດາສະມາຊິກສະພາແຫ່ງຊາດ ແລະ ຂັ້ນແຂວງກ່ຽວກັບປະເດັນຕ່າງໆ ດ້ານວຽກງານ ການຄຸ້ມຄອງທີ່ດິນໃນປະເທດລາວ. ພ້ອມກັນນັ້ນກອງປະຊຸມນີ້ ຍັງເປັນການສ້າງໂອກາດ ປຸກລະດົມໃຫ້ບັນດາສະມາຊິກສະພາ ແລະ ສະມາຊິກສະພາຂັ້ນແຂວງ ໃນແຕ່ລະແຂວງ ໃຫ້ມີຄວາມຕື່ນຕົວໃນການປະກອບສ່ວນເຂົ້າໃນການຕິດຕາມກວດກາວຽກງານຄຸ້ມຄອງທີ່ດິນເພື່ອໃຫ້ເກີດມີຄວາມໂປ່ງໃສ ແລະ ມີປະສິດທິພາບຫຼາຍຂຶ້ນກວ່າເກົ່າ. "*

ທ່ານ ດຣ. ຄຳເຜີຍ ປານມະໄລທອງ, ປະທານກອງປະຊຸມຝຶກອົບຮົມ



ທ່ານ ຄຳເຜີຍ ປານມະໄລທອງ, ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ແຫ່ງສະພາແຫ່ງຊາດ, ປະທານກອງປະຊຸມ ຄັ້ງວັນທີ28-29 ກັນຍາ, 2017.

*ປະຕິທິນກົດໝາຍ ໄດ້ເລີ່ມພັດທະນາມາຕັ້ງແຕ່ປີ 2009 ແລະ ມີເປົ້າໝາຍດຽວກັນກັບ ເປົ້າໝາຍຂອງບັນດາອົງການຈັດຕັ້ງທາງສັງຄົມຢູ່ໃນປະເທດລາວ ແລະ ໃນລະດັບສາກົນ ເພື່ອພັດທະນາເຄື່ອງມືໃນການເຜີຍແຜ່ຄວາມຮູ້ ແລະ ຂໍ້ມູນ ທາງດ້ານນິຕິກຳທີ່ກ່ຽວຂ້ອງກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໃຫ້ແກ່ສາທາລະນະ ແລະ ກຸ່ມເປົ້າໝາຍ.

## ວຽກງານດ້ານການສຶກສາ ກໍລະນີສຶກສາ

### ກໍລະນີສຶກສາ ການພັດທະນາວຽກງານແຜນນຳໃຊ້ທີ່ດິນ

ເພື່ອທົບທວນຄືນ ວຽກງານການວາງແຜນ ແລະ ການປັບປຸງການນຳໃຊ້ທີ່ດິນ, LIWG ໄດ້ວາງຂອບເຂດ ເພື່ອສຶກສາກ່ຽວກັບ ວຽກງານການວາງແຜນນຳໃຊ້ທີ່ດິນໃນໄລຍະຜ່ານມາ ແລະ ປັດຈຸບັນ ເຊິ່ງ ບົດກໍລະນີສຶກສາ ແມ່ນຮັບການວິເຄາະໂດຍ ທ່ານ ສະຕວດ ລີງ.

ສິ່ງທີ່ຄົ້ນພົບຕົ້ນຕໍ ຂອງບົດກໍລະນີສຶກສານີ້ເຫັນວ່າ ໃນຂະນະທີ່ ອົງການພັດທະນາ ສາມາດເຂົ້າໄປມີສ່ວນຮ່ວມໃນວຽກງານດັ່ງກ່າວ ແຕ່ວ່າ ບັນດາອົງກອນດັ່ງກ່າວ ແມ່ນບໍ່ທັນປະສົບຜົນສຳເລັດເທົ່າທີ່ຄວນໃນການເສີມສ້າງຄວາມໝັ້ນຄົງໃນການ ຄອບຄອງນຳໃຊ້ທີ່ດິນ ແລະ ວິຖີຊີວິດຂອງຊຸມຊົນ. ອີກຢ່າງໜຶ່ງ ກໍ່ໄດ້ສະທ້ອນໃຫ້ເຫັນວ່າ ລັດຖະບານແນເຫັນ ວຽກງານການວາງແຜນນຳໃຊ້ທີ່ດິນ ເປັນເຄື່ອງມືໜຶ່ງໃນການບໍລິຫານດ້ານທີ່ດິນ ແລະ ການອອກກົດລະບຽບຕ່າງໆ ຫຼາຍກວ່າ ການເປັນເຄື່ອງມື ສຳລັບ ການສ້າງກຳມະສິດດ້ານທີ່ດິນແກ່ຊຸມຊົນ. ເບິ່ງກໍລະນີສຶກສາສະບັບສົມບູນດັ່ງກ່າວ ໄດ້ທັງ ພາສາລາວ ແລະ ພາສາອັງກິດ.

### ກໍລະນີສຶກສາ 1: 'ການມີສ່ວນຮ່ວມຂອງຊຸມຊົນໃນ ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃນ ສປປ ລາວ'
### ກໍລະນີສຶກສາ 2: 'ການປູກພືດເປັນສິນຄ້າ: ປະຊາຊົນເປັນຜູ້ຈັດຕັ້ງປະຕິບັດ-ລັດຮັບຜິດຊອບ'

**'ກໍລະນີສຶກສາ 1'**

ບົດກໍລະນີສຶກສາກ່ຽວກັບ ການມີສ່ວນຮ່ວມຂອງຊຸມຊົນໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃນ ສປປ. ລາວ ໄດ້ມີການດຳເນີນການຄົ້ນຄວ້າ ເພື່ອສຶກສາກ່ຽວກັບ ການຄຸ້ມຄອງ ແລະ ຂະບວນການຕັດສິນໃຈ ທີ່ກ່ຽວພັນກັບບັນຫາການນຳໃຊ້ທີ່ດິນໃນ ສປປ. ລາວ ແລະ ເພື່ອໃຫ້ເຫັນເຖິງຄວາມຫຼາກຫຼາຍທາງພາກປະຕິບັດຕົວຈິງໃນແຕ່ລະຊຸມຊົນ. ບົດກໍລະນີສຶກສາ ແມ່ນໄດ້ດຳເນີນການສຶກສາຢູ່ສອງບ້ານ ໃນສອງແຂວງຄື ແຂວງ ບໍ່ແກ້ວ ແລະ ແຂວງບໍລິຄຳໄຊ ໂດຍການສຶກສາຮ່ວມກັນລະຫວ່າງ VFI ແລະ ທ່ານ ຣສ. ປອ ນາງ ດຳດວນ ຄວງວິຈິດ ແລະ ທ່ານ ອາຈານ ນາງ ຄຳຜຸ ອິນຖາວອນ, ຈາກມະຫາວິທະຍາໄລແຫ່ງຊາດລາວ.

ບົດກໍລະນີສຶກສານີ້ ແມ່ນຍັງຢູ່ຂັ້ນຕອນການພິຈາລະນາສະຫຼຸບຜົນ ແລະ ຈະມີການເຜີຍແຜ່ໃນໄວໆນີ້.

**'ກໍລະນີສຶກສາ 2'**

ເພື່ອເປັນການສຶກສາ ເຖິງການຈັດການທີ່ດິນ ເພື່ອການປູກພືດເປັນສິນຄ້າ ແລະ ຜົນຕໍ່ການດຳລົງຊີວິດຂອງປະຊາຊົນ, ດັ່ງນັ້ນຈຶ່ງໄດ້ມີ ການສຶກສາ ກ່ຽວກັບກໍລະນີ ການປູກພືດເປັນສິນຄ້າ: ປະຊາຊົນເປັນຜູ້ຈັດຕັ້ງປະຕິບັດ-ລັດຮັບຜິດຊອບ ຂຶ້ນ. ບົດກໍລະນີສຶກສານີ້ ແມ່ນສຶກສາໂດຍ ທ່ານ ປອ. ທຸມທອນ ວົງວິສຸກ, ຄະນະ ວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດລາວ. ບົດກໍລະນີສຶກສາດັ່ງກ່າວ ແມ່ນເນັ້ນໃສ່ການສຶກສາສາມປະເດັນຄື: ເປັນຫຍັງການປູກພືດເປັນສິ່ງຄ້າຈຶ່ງມີການປ່ຽນແປງຕະຫຼອດເວລາ ແລະ ແມ່ນໃຜເປັນຜູ້ຕັດສິນໃນການກຳນົດວ່າ ຄວນປູກພືດພືດຊະນິດໃດ?, ການປູກພືດເປັນສິນຄ້າມີຜົນແນວໃດ ຕໍ່ກັບການປ່ຽນແປງ ການຖືສິດຄອບຄອງທີ່ດິນ?; ແລະ ທັງພາກລັດ ແລະ ປະຊາຊົນມີການຮັບມື ຕໍ່ກັບຜົນກະທົບ (ການປ່ຽນແປງ) ຄືແນວໃດ?.

ບົດກໍລະນີສຶກສານີ້ ແມ່ນຍັງຢູ່ຂັ້ນຕອນການພິຈາລະນາສະຫຼຸບຜົນ ແລະ ຈະມີການເຜີຍແຜ່ໃນໄວໆນີ້.

### ການວິເຄາະ ດຳລັດເລກທີ 84 ແລະ ຮ່າງກົດໝາຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ)

**ການວິເຄາະ ດຳລັດເລກທີ 84**

ການວິເຄາະດຳລັດເລກທີ 84 ວ່າດ້ວຍການຊົດເຊີຍ ແລະ ການຍົກຍ້າຍຈັດສັນ ຈາກໂຄງການພັດທະນາ ຕົ້ນຕໍແມ່ນເພື່ອຕີຄວາມໝາຍ ຂອງມາດຕາທີ 3 ແລະ ທີ 4 (ຂໍ້ທີ 3) ກ່ຽວກັບຜົນກະທົບຕໍ່ກັບສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີ; ນອກນີ້ ກໍ່ໄດ້ສົມທຽບລະຫວ່າງດຳລັດໃໝ່ ເລກທີ 84 ນີ້ ກັບ ສະບັບກ່ອນ (ເລກທີ 192), ດັ່ງນັ້ນ LIWG ຈຶ່ງໄດ້ມີການວາງຂອບເຂດເພື່ອວິເຄາະກ່ຽວກັບປະເດັນດັ່ງກ່າວ ເພື່ອໃຫ້ເຫັນເຖິງວ່າສິ່ງໃດແມ່ນ ຄວາມກັງວົນຫຼັກ, ຮວມທັງຜົນກະທົບທາງບວກ ແລະ ລົບ ທີ່ອາດຈະເກີດຂຶ້ນຈາກການຈັດຕັ້ງປະຕິບັດ ດຳລັດເລກທີ 84 ນີ້.

ບົດວິເຄາະນີ້ ແມ່ນໄດ້ຮັບການວິເຄາະໂດຍ ນັກກົດໝາຍອິດສະຫຼະ ເຊິ່ງຍັງຢູ່ໃນຂັ້ນຕອນພິຈາລະນາຜົນຂອງການວິເຄາະ ແລະ ຈະມີການເຜີຍແຜ່ຫຼັງຜ່ານຄຳຄິດເຫັນ ຂອງຄະນກຳມະການທີ່ກ່ຽວຂ້ອງ.

**ການວິເຄາະ ຮ່າງກົດໝາຍການສົ່ງເສີມການລົງທຶນ (ສະບັບປັບປຸງ)**

ເພື່ອສຶກສາຈຸດແຂງ ແລະ ຈຸດອ່ອນຂອງຮ່າງກົດໝາຍດັ່ງກ່າວ ໂດຍສະເພາະກ່ຽວກັບ ຄວາມສ່ຽງ ແລະ ຜູ້ທີ່ຈະໄດ້ຮັບຜົນກະທົບຕໍ່ຄວາມສ່ຽງດັ່ງກ່າວ, ຄວາມໂປ່ງໃສໃນຂະບວນການລົງທຶນພາຍໃຕ້ກົດໝາຍດັ່ງກ່າວ (ການລົງທຶນໃນຂະແໜງການທີ່ດິນ), ລະດັບຄວາມເຂັ້ມງວດຂອງບັນດາມາດຕະການ ແລະ ເງື່ອນໄຂທີ່ລັດຖະບານກຳນົດຕໍ່ນັກລົງທຶນ ເພື່ອການຈັດຕັ້ງປະຕິບັດກົດໝາຍ ແລະ ໃຫ້ມີຄວາມສອດຄ່ອງກັບຍຸດທະຍາດໃນການພັດທະນາ, ດັ່ງນັ້ນ LIWG ໄດ້ມີການກຳນົດຫົວຂໍ້ທີ່ກ່ຽວຂ້ອງໃນການສຶກສາວິເຄາະກ່ຽວກັບຜົນຂອງ ຮ່າງກົດໝາຍການສົ່ງເສີມການລົງທຶນ ຕໍ່ກັບ ດຳລັດວ່າດ້ວຍ ການຊົດເຊີຍ ແລະ ການຍົກຍ້າຍຈັດສັນ ຈາກໂຄງການພັດທະນາ.

ບົດວິເຄາະນີ້ ແມ່ນໄດ້ຮັບການວິເຄາະໂດຍ ນັກກົດໝາຍອິດສະຫຼະ ເຊິ່ງຍັງຢູ່ໃນຂັ້ນຕອນພິຈາລະນາຜົນຂອງການວິເຄາະ ແລະ ຈະມີການເຜີຍແຜ່ຫຼັງຜ່ານຄຳຄິດເຫັນ ຂອງຄະນກຳມະການທີ່ກ່ຽວຂ້ອງ.

### ກໍລະນີສຶກສາເບື້ອງຕົ້ນໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ

ອີງໃສ່ ຄວາມກັງວົນ ກ່ຽວກັບຜົນກະທົບດ້ານລົບຕໍ່ກັບ ສິດການຄອບຄອງນຳໃຊ້ທີ່ດິນຂອງປະຊາຊົນ ຈາກໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ, ດັ່ງນັ້ນ ກອງເລຂາ LIWG ຮ່ວມກັບນັກສຶກສາຝຶກງານ (ປະລິນຍາໂທ) ຈາກ ມະຫາວິທະຍາໄລ ອຸບົນລາດຊະທານີ, ປະເທດໄທ ທີ່ໄດ້ມາຝຶກງານ ທີ່ ຫ້ອງການກອງເລຂາ LIWGໃນ ລະຫວ່າງເດືອນ 6-7 ປີ 2017 ໄດ້ເກັບກຳຂໍ້ມູນເບື້ອງຕົ້ນຂອງໂຄງການ ເສັ້ນທາງລົດໄຟລາວ-ຈີນ. ເຊິ່ງການເກັບກຳຂໍ້ມູນ ແມ່ນໄດ້ມີການສຳພາດ ບາງສະມາຊິກຂອງ LIWG ທີ່ມີການດຳເນີນ ກິດຈະກຳ ໃນພື້ນທີ່ທີ່ມີຄວາມສ່ຽງທີ່ຈະໄດ້ຮັບຜົນກະທົບຈາກໂຄງການດັ່ງກ່າວ. ສ່ວນຂໍ້ມູນຂັ້ນທຸຕິຍະພູມ (ຂໍ້ມູນມືສອງ) ແມ່ນຈະໄດ້ເກັບກຳຂໍ້ມູນຈາກບັນດາແຫຼ່ງຂໍ້ມູນຕ່າງໆ ຈາກບັນດາເອກະສານ ແລະ ເວັບໄຊ້ຕ່າງໆ.

ກໍລະນີສຶກສາເບື້ອງຕົ້ນນີ້ ແມ່ນຍັງຢູ່ຂັ້ນຕອນການສະຫຼຸບຜົນ ແລະ ຈະມີການນຳສະເໜີຜົນຂອງການສຶກສາແກ່ບັນດາສະມາຊິກ ເພື່ອເປັນການຊອກຫາຊ່ອງທາງໃນການເຮັດວຽກຮ່ວມກັນຂອງບັນດາສະມາຊິກກ່ຽວກັບປະເດັນດັ່ງກ່າວ.

## ກຸ່ມເຮັດວຽກສະເພາະ

### ກຸ່ມທີ່ປຶກສາກ່ຽວກັບການປັບປຸງກົດໝາຍທີ່ດິນ

ເພື່ອປະກອບສ່ວນ ແລະ ຜັກດັນວຽກງານການປັບປຸງກົດໝາຍທີ່ດິນ, ກອງເລຂາ LIWG ໄດ້ເຮັດວຽກປະສານງານໃຫ້ແກ່ກຸ່ມທີ່ປຶກສາ ກ່ຽວກັບການປັບປຸງກົດໝາຍທີ່ດິນ ເຊິ່ງປະກອບມີອົງການ MRLG, FAO, GIZ, Helvetas, VFI ແລະ Mekong Watch.

### ກຸ່ມເຮັດວຽກເພື່ອຜັກດັນການຮ່ວມມືກັບພາກສ່ວນເອກະຊົນ

ກຸ່ມເຮັດວຽກນີ້ແມ່ນກຸ່ມທີ່ເຮັດວຽກຮ່ວມກັນໃນການພັດທະນາຄູ່ມື ພັນທະດ້ວຍຄວາມສະໝັກໃຈສຳລັບທຸລະກິດກະສິກຳທີ່ມີຄວາມຮັບຜິດຊອບໃນ ສປປ ລາວ (VCRA) ແລະ ໃນປັດຈຸບັນ ທາງກຸ່ມ ແມ່ນກຳລັງພັດທະນາ ເຄື່ອງມືໃນການປະເມີນຜົນ ແລະ ກຳລັງນຳສະເໜີ ຄູ່ມືນີ້ ແກ່ພາກສ່ວນຕ່າງໆ ເພື່ອການຮັບຮອງເອົາ. ບັນດາສະມາຊິກຂອງກຸ່ມແມ່ນປະກອບມີ: ອົງການ CARE, SNV, Helvetas, Oxfam, VFI, ແລະ ອົງການ ການຄ້າເປັນທຳລາວ.

ທ່ານສາມາດອ່ານລາຍລະອຽດ VCRA ດັ່ງກ່າວນີ້ໄດ້ທັງສະບັບ ພາສາລາວ ແລະ ພາສາອັງກິດ.

### ກຸ່ມເຮັດວຽກ ພັດທະນາ ປະທິນກົດໝາຍສະບັບປີ 2018

ໃນກອງປະຊຸມຄັ້ງທຳອິດ ຂອງການສ້າງປະຕິທິນປີ 2018 ແມ່ນໄດ້ມີການກຳນົດ ບັນດາສະມາຊິກ ເພື່ອແຕ່ງຕັ້ງກຸ່ມເຮັດວຽກສະເພາະ ໃນການພັດທະນາປະຕິທິນກົດໝາຍສະບັບປີ 2018. ກຸ່ມດັ່ງກ່າວ ແມ່ນກຳລັງດຳເນີນການສະຫຼຸບຜົນຂອງການອອກແບບປະຕິທິນ. ບັນດາສະມາຊິກໃນກຸ່ມປະກອບມີ: ໂຄງການ LIFE, VFI, JVC, PSNUA, LBA*, ADWLE, SODA, ແລະ GCA.

* ສະມາຄົມຊີວະນາໆພັນລາວ

## ຍຸດທະສາດ ການສື່ສານ-ແລກປ່ຽນຂໍ້ມູນຂອງ LIWG

### ຍຸດທະສາດ ການສື່ສານ-ແລກປ່ຽນຂໍ້ມູນຂອງ LIWG

#### ເວັບໄຊ້ LIWG

ຢູ່ໃນຊ່ວງໄຕມາດນີ້, ກອງເລຂາ LIWG ໄດ້ມີການເຜີຍແຜ່ຂໍ້ມູນ-ຂ່າວສານກ່ຽວກັບປະເດັນທີ່ດິນ ແລະ ຊັບພະຍາການທຳມະຊາດລົງເວັບໄຊ້ ຢ່າງເປັນປະຈຳ. ສື່ພິມ ບົດຄວາມແນະນຳ ຕ່າງໆ ລວມທັງສື່ພິມລ່າສຸດແມ່ນໄດ້ມີການເຜີຍແຜ່ປະຈຳໄຕມາດນີ້. ທ່ານສາມາດເຂົ້າເບິ່ງເອກະສານດັ່ງກ່າວໄດ້ ທີ່ນີ້ ຫຼື ທ່ານສາມາດເຂົ້າເບິ່ງເອກະ ສານ ແລະ ຂໍ້ມູນເພີ່ມເຕີມຂອງເວັບໄຊ້ພວກເຮົາໄດ້: www.laolandinfo.org

#### ອີເມວກຸ່ມ LIWG

ເພື່ອເຊື່ອມສານ ແລະ ຕິດຕໍ່ພົວພັນກັນຢ່າງເປັນປະຈຳກັບບັນດາສະມາຊິກ, ກອງເລຂາ LIWG ໄດ້ເຜີຍແຜ່ ແລະ ນຳສະເໜີ ຂໍ້ມູນຂ່າວສານຢ່າງເປັນປະຈຳ ທັງພາສາລາວ ແລະ ພາສາອັງກິດ ໂດຍຜ່ານ ອີເມວກຸ່ມ LIWG ພ້ອມທັງ ແຈ້ງບັນດາກິດຈະກຳທີ່ກ່ຽວ ຂ້ອງທີ່ບັນດາສະມາຊິກ ທີ່ສົນໃຈທີ່ຈະເຂົ້າຮ່ວມ. ການສື່ດ້ວຍວິທີການນີ້ ເປັນອີກວິທີທາງໜຶ່ງເພື່ອໃຫ້ໝັ້ນໃຈວ່າ ບັນດາສະມາຊິກສາມາດຮັບຂໍ້ມູນຂ່າວສານກ່ຽວກັບປະເດັນທີ່ດິນ, ການລົງທຶນໂດຍກົງຂອງນັກລົງທຶນຈາກຕ່າງປະເທດ ແລະ ປະເດັນຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງທ່ວງທັນ.

ຊ່ອງທາງນີ້ ຍັງເປັນຊ່ອງທາງໜຶ່ງທີ່ບັນດາສະມາຊິກສາມາດໃຊ້ເປັນພື້ນທີ່ໃນການສົນທະນາ ແລກປ່ຽນຮ່ວມກັນ ແລະ ເພື່ອແຈ້ງເຕືອນກ່ຽວກັບ ປະເດັນດ້ານທີ່ດິນໃນປະເທດລາວ. ຫາກບັນດາທ່ານມີຂໍ້ມູນທີ່ຢາກແລກປ່ຽນ ແມ່ນສາມາດສົ່ງ ຫຼື ນຳສະເໜີຜ່ານກຸ່ມນີ້ໄດ້ ຫຼື ສາມາດສົ່ງຫາ: co@laolandinfo.org ເພື່ອໃຫ້ນຳສະເໜີ ຂໍ້ມູນລົງໃນກຸ່ມໄດ້.

#### ເຟສບຸກ LIWG

ໃນຊ່ວງໄຕມາດນີ້ ກອງເລຂາ LIWG ກໍ່ຍັງໄດ້ ເຜີຍແຜ່ຂໍ້ມູນຂ່າວສານຜ່ານ ໜ້າເຟສບຸກ LIWG ຢ່າງເປັນປະຈຳ ກ່ຽວກັບປະເດັນທີ່ດິນ ແລະ ການເຜີຍແຜ່ການເຄື່ອນໄຫວບັນດາກິດຈະກຳ ແລະ ວຽກງານຕ່າງໆຂອງ LIWG. ເຊິ່ງເຫັນວ່າ ການສື່ສານ ແລະ ແລກປ່ຽນຂໍ້ມູນໂດຍຊ່ອງທາງນີ້ ແມ່ນສາມາດເຂົ້າເຖິງຜູ້ຮັບ ແລະ ຜູ້ສົ່ງຂໍ້ມູນຢ່າງງ່າຍດາຍ ແລະ ໄວກວ່າເດີມ.

ທ່ານສາມາດຕິດພວກເຮົາທາງເຟສບຸກໄດ້ ທີ່ນີ້

## ກິດຈະກຳຈາກ ສະມາຊິກ LIWG/ໂຄງການລິເລີ່ມພາຍໃຕ້ LIWG

### ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ (LIFE)

ໂຄງການ LIFE ເປັນໂຄງການໜຶ່ງທີ່ມີເອກະລັກະເພາະ ເຊິ່ງເປັນໂຄງການໜຶ່ງທີ່ລິເລີ່ມເກີດຂຶ້ນພາຍໃຕ້ LIWG, ມີຫ້ອງການຕັ້ງຢູ່ທີ່ ອົງການບ້ານຈຸດສຸມສາກົນ (VFI) ແລະ ຈັດຕັ້ງປະຕິບັດໂດຍກຸ່ມຄູ່ຮ່ວມງານ ທີ່ເປັນອົງການທີ່ບໍ່ຫວັງຜົນກຳໄລ ບົນພື້ນຖານຄວາມເທົ່າທຽມກັນ. ໂຄງການ LIFE ແມ່ນຊີ້ນຳໂດຍບາງທ່ານທີ່ເປັນຄະນະກຳມະການຂອງ LIWG ເຊັ່ນ: ອົງການ CCL, World Renew, VFI, ກອງເລຂາ LIWG ຮ່ວມກັບ ອົງການ FAO. ການຝຶກອົບຮົມຂອງໂຄງການ LIFE ແມ່ນເນັ້ນໃສ່ ການຝຶກອົບຮົມກ່ຽວກັບສິດທິທີ່ດິນ ເຊັ່ນ ສິດຄອບຄອງທີ່ດິນຕາມປະເພນີ ແລະ ສັນຍາກະສິກຳໃນ ປະເທດລາວ ເປັນຕົ້ນ. ການຈັດຝຶກອົບຮົມຂອງໂຄງການ LIFE ແມ່ນອີງໃສ່ຄວາມຕ້ອງການ ແລະ ການສະເໜີຂອງຄູ່ຮ່ວມງານ ເພື່ອໃຫ້ຕອບສະໜອງຄວາມຕ້ອງການຂອງຄູ່ຮ່ວມງານ ແລະ ແທດເໝາະກັບກຸ່ມເປົ້າໝາຍ.

ພາຍໃນເດືອນ ພຶດສະພາ - ສິງຫາ ປີ 2017 ໂຄງການ LIFE ໄດ້ສຳເລັດການຈັດຝຶກອົບຮົມກັບ ຄູ່ຮ່ວມງານໃນແຂວງຕ່າງໆ ເຖິງ 16 ຄັ້ງ.

ທ່ານສາມາດຮຽນຮູ້ເພີ່ມເຕີມກ່ຽວກັບໂຄງການ LIFE ໄດ້ ທີ່ນີ້.

### ກິດຈະກຳໃນໄຕມາດໜ້າຂອງ LIWG (ຕຸລາ - ທັນວາ, 2017)

- ກອງປະຊຸມ ຜົນການສຶກສາ ການຫັນປ່ຽນທີ່ດິນເປັນທຶນ+10 ປີ
- ກອງປະຊຸມຄັ້ງງສຸດທ້າຍປະຈຳປີ ຂອງການ ສ້າງປະຕິທິນກົດໝາຍປີ 2018 ແລະ ການເປີດໂຕປະຕິທິນປີ2018 ທ້າຍເດືອນ ທັນວາ 2017
- ການປະກອບສ່ວນ ຕໍ່ການປັບປຸງກົດໝາຍທີ່ດິນ: ຕິດຕາມຜົນຈາກ ກຸ່ມເຮັດວຽກຂະແໜງການຍ່ອຍກ່ຽວກັບທີ່ດິນ ແລະ ກຸ່ມທີ່ປຶກສາກ່ຽວກັບການປັບປຸງກົດໝາຍທີ່ດິນ (ສະບັບປັບປຸງ)
- ກຸ່ມເຮັດວຽກເພື່ອຜັກດັນການຮ່ວມມືກັບພາກສ່ວນເອກະຊົນ: ພັດທະນາ ເຄື່ອງມືໃນການຕິດຕາມຜົນ ແລະ ວາງແຜນການທົດລອງນຳໃຊ້ VCRA.
- ການເຊື່ອມຕໍ່ກັນລະຫວ່າງ ຊ່ອງທາງການສື່ສານ-ແລກປ່ຽນຂໍ້ມູນຂ່າວສານຂອງ LIWG ຕໍ່ກັບ MLIKE ເຊັ່ນ: ການສົນທະນາກ່ຽວກັບປະເດັນທີ່ດິນທາງອອນລາຍ ແລະ ຫໍສະໝຸດອອນລາຍ.

ຕິດຕໍ່ພົວພັນພວກເຮົາໄດ້ທີ່:

ໂທ: +85630 981 5657
ອີເມວ: info@laolandinfo.org
ເວັບໄຊ້: www.laolandinfo.org
ເຟສບຸກ: ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG